# ການນັດພົບ ຄັ້ງສຸດທ້າຍ

(ອ່ານລູກາ 16:19 - 31)

---

"ມະນຸດຖືກຊົງກໍານົດໄວ້ແລ້ວວ່າຈະຕ້ອງຕາຍເທື່ອດຽວ ແລະຫຼັງຈາກນັ້ນຈະມີການຊົງພິພາກສາສັນໃດ"

( ເຮັບເຣີ 9:27 )

---

ໃນຕອນເຊົ້າວັນເສົາມື້ນຶ່ງ ຄົນຂັບຣົດແກ່ສົບ (ຄົນຕາຍ) ຜູ້ນຶ່ງໄດ້ດື່ມເຫຼົ້າໃນຊົ່ວໂມງເຮັດການເພາະຢາກໃຫ້ຮ່າງກາຍຂອງຕົນອົບອຸ່ນຂຶ້ນຖ້າມກາງອາກາດໜາວແລະຝົນກໍາລັງຕົກ. ແທ້ທີ່ຈິງແລ້ວ ລາວບໍ່ໄດ້ຮັບຄວາມອົບອຸ່ນຈາກການ ດື່ມເຫຼົ້ານັ້ນເລີຍ ພຽງແຕ່ວ່າເຊື້ອແອລກໍຮໍລ໌ ໄດ້ຫຼຸດຜ່ອນອຸນຫະພູມຮ່າງກາຍຂອງລາວລົງໃກ້ຄຽງກັບອາກາດເທົ່ານັ້ນ. ຄວາມມຶນເມົາເປັນຜົນໃຫ້ລາວຫຼົງທາງ ໄປບໍ່ຮອດປ່າຊ້າ. ບັນດາຜູ້ມາຮ່ວມພິທີຝັງສົບຈໍານວນຫຼວງຫຼາຍໄດ້ລໍຖ້າລາວເປັນເວລາຫຼາຍຊົ່ວໂມງ ກໍຍັງບໍ່ເຫັນລາວມາຮອດປ່າຊ້າ. ໃນຕອນແລງວັນດຽວກັນນັ້ນ ເຈົ້າໜ້າທີ່ຕໍາຣວດໄດ້ພົບລາວນອນຫຼັບຄາພວງມະລັຍຣົດແກ່ສົບຢູ່ຂ້າງຖນົນ. ແຕ່ເວລານັ້ນມັນກໍຄໍ່າເກີນໄປທີ່ຈະປະກອບພິທີຝັງສົບ, ເພາະວ່ານະໂຍບາຍຂອງປ່າຊ້າ ບໍ່ມີການຮັບສົບ ແລະປະກອບພິທີໃດໆ ໃນວັນອາທິດ.

ພໍມາເຖິງວັນຈັນ, ລາຍງານຂ່າວຈາກໜັງສືພິມກ່າວວ່າ ຊາຍອາຍຸ 62 ປີທີ່ເສັຍຊີວິດນັ້ນ ຕ້ອງຊັກຊ້າເປັນເວລາເຖິງ 2 ວັນ ຕໍ່ການນັດພົບຄັ້ງສຸດທ້າຍຂອງລາວ. ຕາມຄວາມຈິງແລ້ວ, ການນັດພົບຄັ້ງສຸດທ້າຍຂອງລາວໄດ້ກົງກັບເວລານັດພົບພໍດີ. ການທີ່ຝັງສົບຊ້າໄປ 2 ວັນນັ້ນບໍ່ໄດ້ຖ່ວງເວລາການນັດພົບຂອງລາວແຕ່ຢ່າງໃດ ເພາະວ່າຈິດວິນຍານຂອງລາວໄດ້ໄປພົບກັບອົງພຣະຜູ້ເປັນເຈົ້າທັນທີຕາມເວລາແຫ່ງການນັດພົບຄັ້ງສຸດທ້າຍຂອງລາວ. ວິນຍານທຸກດວງຂອງມະນຸດຈະໄດ້ຮັບຜົນສະທ້ອນເຊັ່ນດຽວກັນນີ້ຈົນວ່າພຣະເຢຊູສະເດັດກັບມາອີກ, ຊຶ່ງເປັນຄວາມຈິງຕໍ່ມະນຸດທຸກໆຄົນ. ສໍາລັບຜູ້ເປັນບຸດຂອງພຣະເຈົ້າ, ຄວາມຕາຍຈະມີຜົນຢ່າງກະທັນຫັນ ຄືຈິດວິນຍານຂອງລາວຈະຖືກສົ່ງຂຶ້ນໄປພົບກັບພຣະຜູ້ໂຜດໃຫ້ພົ້ນທັນທີ (2 ໂກຣິນໂທ 5:8 ) ແຕ່ສໍາລັບຜູ້ທີ່ປະຕິເສດ ບໍ່ຍອມຮັບອົງພຣະເຢຊູ ( ໂຢຮັນ 3:18 ) ຄວາມຕາຍຂອງລາວ ຄືການຖືກອັດປະຕູຕັນ ແຕ່ອີກປະຕູນຶ່ງຈະເປີດຕ້ອນຮັບລາວ ແລ້ວລາວຈະໄດ້ໄປຢູ່ທີ່ນັ້ນຕລອດໄປເປັນນິດຄື ບ່ອນທີ່ບໍ່ມີພຣະຜູ້ເປັນເຈົ້າ. (ນະຣົກ ).

ພວກເຮົາທັງໝົດມີນັດກັບຜູ້ສ້າງພວກເຮົາຂຶ້ນມາ ເຖິງແມ່ນວ່າເຮົາຈະຕຽມພ້ອມ ຫຼືບໍ່ໄດ້ຕຽມພ້ອມ ກໍຕາມ, ຜົນຂອງການນັດພົບຄັ້ງສຸດທ້າຍຂອງເຮົານັ້ນຂຶ້ນຢູ່ກັບວ່າ ເວລານີ້, ດຽວນີ້ເຮົາເຮັດກັບອົງພຣະເຢຊູຢ່າງໃດແດ່? ທ່ານເດ, ພ້ອມແລ້ວຫຼືຍັງສໍາລັບການນັດພົບຄັ້ງສຸດທ້າຍຂອງທ່ານ?

---

( ໃນທັນທີທີ່ເຮົາໃຈຂາດ ບາດກ້າວຂອງເຮົາຈະເຂົ້າໄປສູ່ຄວາມຍິນດີອັນຕລອດໄປເປັນນິດ ຫຼືບໍ່ກໍຈະກ້າວໄປສູ່ການພິພາກສາຕັດສິນ (ຄວາມທຸກທໍຣະມານ ) ອັນຕລອດໄປເປັນນິດ. )

---